ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ: 466 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ: 17 ມີນາ 2023

**ໜັງສືແຈ້ງການ (ແນະນຳເພີ່ມເຕີມ)**

**ເຖິງ:** ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ແລະ ຫົວໜ້າສາຂາທະນາຄານທຸລະກິດຕ່າງປະເທດ

**ເລື່ອງ:** ການຈັດຕັ້ງປະຕິບັດຕໍ່ການໂອນ ແລະ ຖອນເງິນຝາກຈາກບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວ 6 ປີຂຶ້ນໄປ.

- ອີງຕາມຂໍ້ຕົກລົງວ່າດ້ວຍບັນຊີທີ່ບໍ່ມີການເຄື່ອນໄຫວ ສະບັບເລກທີ 1190/ທຫລ, ລົງວັນທີ 30 ທັນວາ 2019 ແລະ ບົດແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍບັນຊີທີ່ບໍ່ມີການເຄື່ອນໄຫວ ສະບັບເລກທີ 525/ກຄທ, ລົງວັນທີ 11 ກັນຍາ 2020;
- ອີງຕາມໜັງສືແຈ້ງການແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍບັນຊີທີ່ບໍ່ມີການເຄື່ອນໄຫວ ສະບັບເລກທີ 571/ກຄທ, ລົງວັນທີ 19 ຕຸລາ 2021.

ກົມຄຸ້ມຄອງທະນາຄານທຸລະກິດ (ກຄທ), ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍແຈ້ງມາຍັງທ່ານຊາບກ່ຽວກັບ ການຈັດຕັ້ງປະຕິບັດການໂອນ ແລະ ຖອນເງິນຈາກບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວ 6 ປີຂຶ້ນໄປ ທີ່ຖືກໂອນມາຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ, ແມ່ນໃຫ້ປະຕິບັດດັ່ງລາຍລະອຽດລຸ່ມນີ້:

## I. ການໂອນ ຫຼື ມອບເງິນເຂົ້າບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວເຂົ້າມາຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ.

ການໂອນ ຫຼື ມອບເງິນບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວເຂົ້າມາຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ ທະນາຄານຕ້ອງປະຕິບັດໃຫ້ສອດຄ່ອງຕາມລະບຽບການທີ່ ທຫລ ກຳນົດໄວ້ ຊຶ່ງທະນາຄານຕ້ອງປະກອບໜັງສືສະເໜີຂໍໂອນ ຫຼື ປະກອບໃບມອບເງິນເຂົ້າບັນຊີ 2131122 ຊື່ບັນຊີ: *ບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວຂອງ ທຫລ ຢູ່ກົມບໍລິການ ທະນາຄານ (ບກ)*, ພ້ອມຄັດຕິດຕາຕະລາງລາຍງານບັນຊີບໍ່ມີການເຄື່ອນໄຫວຕາມບົດແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍບັນຊີທີ່ບໍ່ມີການເຄື່ອນໄຫວ ສະບັບເລກທີ 525/ກຄທ, ລົງວັນທີ 11 ກັນຍາ 2020 (ແບບພິມລາຍງານ 2) ມາຍັງ ບກ. ພາຍຫຼັງທີ່ທະນາຄານສຳເລັດການໂອນເງິນຝາກບັນຊີທີ່ບໍ່ມີການເຄື່ອນໄຫວ 6 ປີຂຶ້ນໄປ ຢູ່ ບກ ແລ້ວ, ທະນາຄານຕ້ອງລາຍງານໃຫ້ແກ່ ກຄທ ຊາບ ພາຍໃນ 5 ວັນລັດຖະການ ພ້ອມຄັດຕິດຕາຕະລາງລາຍງານບັນຊີບໍ່ມີການເຄື່ອນໄຫວ (ແບບພິມລາຍງານ 2) ຕາມທີ່ໄດ້ສົ່ງໃຫ້ແກ່ ບກ ໃນເບື້ອງຕົ້ນ ແລະ ສຳເນົາໃບແຈ້ງໜີ້ ຫຼື ຫຼັກຖານການໂອນສຳເລັດ ມາຍັງ ກຄທ.

## II. ການຖອນເງິນຝາກບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ.

ການສະເໜີຂໍຖອນເງິນຝາກຈາກບັນຊີທີ່ບໍ່ມີການເຄື່ອນໄຫວ 6 ປີຂຶ້ນໄປ ທີ່ຖືກໂອນເຂົ້າມາຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ ມາຍັງ ກຄທ ທະນາຄານຕ້ອງປະກອບເອກະສານເບື້ອງຕົ້ນ ມາຍັງ ກຄທ ດັ່ງນີ້:



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

1. **ໜັງສືສະເໜີເບື້ອງທະນາຄານ:** ເນື້ອໃນໜັງສືສະເໜີຕ້ອງລະບຸລາຍລະອຽດຊັດເຈນ ແລະ ຄັດຕິດເອກະສານດັ່ງນີ້:
   - ❖ **ລາຍລະອຽດທີ່ຕ້ອງລະບຸຊັດເຈນ:** 1). ວັນທີ, ເດືອນ, ປີ ແລະ ເລກທີຂອງເອກະສານ ທີ່ທະນາຄານໄດ້ສຳເລັດການໂອນມາຍັງ ທຫລ ແລະ 2). ສາເຫດການສະເໜີຂໍຖອນເງິນ;
   - ❖ **ເອກະສານທີ່ຕ້ອງຄັດຕິດ:** 1). ໜັງສືແຈ້ງຕອບຈາກ ກຄທ ທີ່ອານຸຍາດໃຫ້ໂອນເງິນມາຍັງ ທຫລ (ສະບັບກ່ອນແຈ້ງການສະບັບເລກທີ 571 ຫຼື ກຄທ, ລົງວັນທີ 19 ຕຸລາ 2021 ມີຜົນສັກສິດ) ແລະ 2). ໜັງສືລາຍງານການໂອນເງິນສຳເລັດມາຍັງ ກຄທ ສະບັບທີ່ຕິດພັນກັບການໂອນເງິນດັ່ງກ່າວ (ຮ່າງໜັງສືສະເໜີຄັດຕິດມາພ້ອມນີ້);
2. **ເອກະສານການຢັ້ງຢືນການໂອນເຂົ້າມາ ທຫລ ເຊັ່ນ:** ໃບແຈ້ງໜີ້, ໃບມອບເງິນສົດ ແລະ ໃບຫຼັກຖານອື່ນໆ (ສຳເນົາສີ);
3. **ໜັງສືຢັ້ງຢືນຕົວຕົນ ຫຼື ໃບຊອກຮູ້ຂໍ້ມູນລູກຄ້າ (KYC) ທີ່ພິມອອກຈາກລະບົບ Core Banking** (ສະບັບແທ້);
4. **ໃບສະເໜີການຂໍຖອນເງິນຝາກເບື້ອງລູກຄ້າ**: ມີຮ່າງແບບຟອມການຂໍຖອນເງິນຄັດຕິດ ເພື່ອໃຫ້ທະນາຄານນຳໃຊ້ໃຫ້ລູກຄ້າທະນາຄານປະກອບຂໍ້ມູນເວລາທີ່ມາຂໍຖອນເງິນຄືນ (ສະບັບແທ້);
5. **ເອກະສານອື່ນໆຕາມແຕ່ລະກໍລະນີ ແມ່ນຕ້ອງຄັດຕິດເອກະສານດັ່ງນີ້:**

   **5.1. ກໍລະນີລູກຄ້າເປັນບຸກຄົນ ຊຶ່ງເຈົ້າຂອງບັນຊີສະເໜີໂດຍກົງຕໍ່ທະນາຄານ:** ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (Passport) ພ້ອມລາຍເຊັນ ແລະ ເບີໂທລູກຄ້າ (ສຳເນົາສີ);

   **5.2. ກໍລະນີລູກຄ້າອົງກອນ ຫຼື ນິຕິບຸກຄົນ ຊຶ່ງອົງກອນ ຫຼື ນິຕິບຸກຄົນສະເໜີໂດຍກົງຕໍ່ທະນາຄານ:**
   - ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (Passport) ພ້ອມລາຍເຊັນ ແລະ ເບີໂທເຈົ້າຂອງວິສາຫະກິດ (ສຳເນົາສີ);
   - ໃບທະບຽນວິສາຫະກິດ (ສຳເນົາສີ);

   **5.3. ກໍລະນີລູກຄ້າເປັນອົງກອນ ຫຼື ນິຕິບຸກຄົນ ສຳລັບກໍລະນີມີການມອບສິດ ຫຼື ແຕ່ງຕັ້ງໃຫ້ຜູ້ມາຖອນເປັນຜູ້ມີສິດຕາມກົດໝາຍ**:
   - ໃບມອບສິດ ຫຼື ເອກະສານແຕ່ງຕັ້ງເປັນຜູ້ຮັບມອບສິດຕາມກົດໝາຍ ຈາກອົງກອນ ຫຼື ນິຕິບຸກຄົນ (ສຳເນົາສີ ຫຼື ສະບັບແທ້);
   - ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (Passport) ພ້ອມລາຍເຊັນ ແລະ ເບີໂທຂອງຜູ້ຮັບມອບສິດຕາມກົດໝາຍ (ສຳເນົາສີ);
   - ໃບທະບຽນວິສາຫະກິດ (ສຳເນົາສີ);

   **5.4. ກໍລະນີ (ບຸກຄົນທີ 3) ໄດ້ຮັບມອບສິດຈາກເຈົ້າຂອງບັນຊີ ຫຼື ໄດ້ຮັບມອບສິດຕາມກົດໝາຍຈາກເຈົ້າຂອງບັນຊີ:**
   - ❖ **ກໍລະນີເຈົ້າຂອງບັນຊີທີ່ຍັງມີຊີວິດ:** ແມ່ນຕ້ອງຄັດຕິດເອກະສານດັ່ງນີ້:
     - ໃບມອບສິດຈາກເຈົ້າຂອງບັນຊີ ທີ່ເຊັນຮັບຮອງຈາກອຳນາດການປົກຄອງທ້ອງຖິ່ນທີ່ຂຶ້ນກັບ. ໃນນັ້ນ, ໃຫ້ລະບຸສາເຫດການມອບສິດໃຫ້ບຸກຄົນທີ 3 ມາດຳເນີນທຸລະກຳແທນ ພ້ອມປະທັບລາຍນິ້ວມືເຈົ້າຂອງບັນຊີ (ສະບັບແທ້);
     - ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (Passport) ພ້ອມລາຍເຊັນ ແລະ ເບີໂທຂອງເຈົ້າຂອງບັນຊີ ແລະ ຜູ້ມາຖອນ (ສຳເນົາສີ);
     - ໜັງສືຢັ້ງຢືນລາຍນິ້ວມືຂອງເຈົ້າຂອງບັນຊີ (ລາຍນິ້ວມືທີ່ປະທັບໃນໃບມອບສິດ) ທີ່ໄດ້ຮັບການຢັ້ງຢືນຈາກ ປກສ ເມືອງ ຫຼື ແຂວງທີ່ຂຶ້ນກັບ ຫຼື ກົມກົງສຸນ ຫຼື ສະຖານທູດ ຫຼື ດ່ານກວດຄົນເຂົ້າເມືອງ ຫຼື ກະຊວງ ຫຼື ກົມກອງທີ່ກ່ຽວຂ້ອງ (ສະບັບແທ້);
   - ➢ **ສຳລັບເຈົ້າຂອງບັນຊີທີ່ຍັງມີຄວາມສາມາດດ້ານການປະພຶດ ແຕ່ປະຈຸບັນເຂົ້າຮັບການປິ່ນປົວ** ໃຫ້ປະກອບເອກະສານໃບຢັ້ງຢືນການປິ່ນປົວ ຄັດຕິດພ້ອມ;